ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------=== 000 ===-----

ກະຊວງການຄ້າ

U806 /ລກທີ ______/ກຄ.ພນ.

ນະຄອນວຽງຈັນ, ວັນທີ 23 JUL 2002

## ຄຳສັ່ງແນະນຳ

ເຖິງ: ທ່ານຫົວໜ້າພະແນກການຄ້າແຂວງ, ກຳແພງນະຄອນ ແລະ ເຂດພິເສດ ໃນທົ່ວປະເທດ.

ເລື່ອງ: ການແນະນຳໃຫ້ບັນດາບໍລິສັດ, ວິສະຫະກິດ ແລະ ຮ້ານຈຳໜ່າຍຕ່າງໆ ນຳເອົາສິນຄ້າທີ່ຜະລິດໄດ້ພາຍໃນປະເທດ ໄປຈຳໜ່າຍແທນການນຳເຂົ້າ.

- ອີງຕາມ ດຳລັດ ເລກທີ 24/ນຍ, ລົງວັນທີ 24/3/1999 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການຄ້າ.
- ອີງຕາມ ບົດບັນທຶກກອງປະຊຸມ ເຫັນດີ ເອກະພາບທາງດ້ານວິຊາການຂອງຂະແໜງການທີ່ກ່ຽວຂ້ອງ ສະບັບເລກທີ 0306/ພນ; ລົງວັນທີ 17/7/2002.
- ອີງໃສ່ ການສະເໜີ ແລະ ຄວາມພ້ອມທາງດ້ານປະລິມານສິນຄ້າແຕ່ລະລາຍການຂອງໂຮງງານ-ບໍລິສັດຕ່າງໆ.

ເພື່ອເປັນການກະຕຸກຊຸກຍູ້ ສົ່ງເສີມການລົງທຶນເຂົ້າໃນວຽກງານຜະລິດສິນຄ້າ ຮັບໃຊ້ພາຍໃນ, ທົດແທນການນຳເຂົ້າ ແລະ ຜະລິດເພື່ອສົ່ງອອກ ໃຫ້ນັບມື້ນັບຫລາຍຂຶ້ນ. ລັດສົ່ງເສີມ ແລະ ປົກປ້ອງສິດອັນຊອບທຳ ຕໍ່ຜູ້ລົງທຶນສູ່ການຜະລິດສິນຄ້າ ໂດຍປະຕິບັດຕາມທິດທາງນະໂຍບາຍຂອງພັກ-ລັດ ກ່ຽວກັບ ພາລະບົດບາດໜ້າທີ່ຂອງອົງການຄຸ້ມຄອງມະຫາພາກ. ກະຊວງການຄ້າຈຶ່ງອອກຄຳສັ່ງແນະນຳ ເຖິງຫົວໜ້າພະແນກການຄ້າແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຕາມທິດທາງຕໍ່ໄປນີ້:

1/- ລາຍການສິນຄ້າທີ່ແຈ້ງມານີ້ ແມ່ນຜະລິດຕະພັນທີ່ຜະລິດຢູ່ພາຍໃນປະເທດ, ຊຶ່ງມີມາດຕະຖານ, ຂະໜາດ, ຄຸນນະພາບ, ລາຄາ, ຈຳນວນ ທີ່ສາມາດຕອບສະໜອງໄດ້ກັບຄວາມຕ້ອງການຂອງຕະຫລາດ ກໍ່ຄືຜູ້ຊົມໃຊ້ໄດ້ຢ່າງພຽງພໍ ເປັນຕົ້ນ: ເຫລັກເສັ້ນ, ເຫລັກຮູບປະພັນ, ກະເບື້ອງມຸງຫລັງຄາ, ຫລັບກະເບື້ອງ, ຫລັບຊີແພກ, ທໍ່ PVC, ຊີມັງທຸກຊະນິດ ແລະ ນ້ຳຢາລ້າງຈານ.

(ລາຍລະອຽດ ມີເອກະສານຂັດຕິດ ເລກທີ ..0316../ພນ; ລົງວັນທີ ..23/07/02..............)

2/- ໃຫ້ຫົວໜ້າພະແນກການຄ້າແຂວງ, ກຳແພງນະຄອນ ແລະ ເຂດພິເສດໃນທົ່ວປະເທດ ຈົ່ງໄດ້ແນະນຳ, ລຸລ່ວງ ໃຫ້ກຸ່ມບໍລິສັດ, ບໍລິສັດຕ່າງໆ ນັບທັງພາກລັດ ແລະ ເອກະຊົນ ຈົ່ງໄດ້ຮັບຮູ້ ແລະ ຂຶ້ນແຜນ, ຜູກພັນຊື້-ຂາຍສິນຄ້າທີ່ເຮົາຜະລິດໄດ້ນັ້ນ ໄປຈຳໜ່າຍ.

3/- ບໍລິສັດ ຫລື ນິຕິບຸກຄົນຕ່າງໆທີ່ມີຈຸດປະສົງ ເພື່ອນຳເຂົ້າສິນຄ້າປະເພດຕ່າງໆທີ່ໄດ້ລະບຸໄວ້ຢູ່ໃນຄຳສັ່ງແນະນຳສະບັບນີ້ ຈາກຕ່າງປະເທດ ຊຶ່ງແມ່ນປະເພດ, ຂະໜາດ, ຄຸນນະພາບ ດຽວກັນກັບສິນຄ້າທີ່ຜະລິດຢູ່ພາຍໃນ ເພື່ອມາຈຳໜ່າຍ, ຮັບໃຊ້ໂຄງການກໍ່ສ້າງໃດນຶ່ງ ຫລື ກໍລະນີ ຫາກໂຮງງານຜະລິດບໍ່ທັນ ແລະ ກໍລະນີອື່ນໆ ແຕ່ເຫັນວ່າຄວາມຕ້ອງການຂອງຕະຫລາດຍັງມີສູງຢູ່ນັ້ນ, ໃຫ້ທາງພະແນກການຄ້າ ນຳສະເໜີເຖິງກະຊວງການຄ້າ ເພື່ອພິຈາລະນາ ຫາກເຫັນວ່າມີຄວາມຈຳເປັນ.

4/- ບໍລິສັດ-ໂຮງງານ ຜູ້ຜະລິດສິນຄ້ານັ້ນ ຕ້ອງຮັບປະກັນການບໍລິການ, ການຂົນສົ່ງ, ການສະໜອງໃຫ້ເປັນປົກກະຕິ ຕາມມາດຖານຄຸນນະພາບ, ພ້ອມນັ້ນ ກໍ່ໄດ້ເອົາໃຈໃສ່ໂຄສະນາ ແນະນຳສິນຄ້າ ແລະ ຂະຫຍາຍຕົວແທນຈຳໜ່າຍສິນຄ້າຂອງຕົນ ໃຫ້ກວ້າງອອກຂື້ນໄປເລື້ອຍໆ ໃນຂອບເຂດທົ່ວປະເທດ.

5/- ບັນດາພະແນກການຄ້າແຂວງອື່ນໆທີ່ບໍ່ໄດ້ມີການແນະນຳນັ້ນ ການອອກອະນຸຍາດນຳເຂົ້າສິນຄ້າປະເພດທີ່ໄດ້ກຳນົດໄວ້ໃນຄຳສັ່ງແນະນຳສະບັບນີ້ ໃຫ້ນຳເຂົ້າຮັບໃຊ້ສະເພາະຂອບເຂດແຂວງຂອງຕົນ ຕາມແຜນດຸ່ນດ່ຽງປະຈຳປີເທົ່ານັ້ນ. ພ້ອມນັ້ນ ໃຫ້ຕິດຕາມ ກວດກາ ຄຳສັ່ງແນະນຳຕ່າງໆຂອງກະຊວງການຄ້າທີ່ໄດ້ອອກໄປແລ້ວນັ້ນ ກ່ຽວກັບ ຄຸ້ມຄອງການນຳເຂົ້າສິນຄ້າ ທີ່ລາວເຮົາຜະລິດໄດ້ແລ້ວນັ້ນ ຢ່າງເຂັ້ມງວດກວ່າເກົ່າ.

6/- ມອບໃຫ້ກົມການຄ້າຕ່າງປະເທດ, ກົມການຄ້າພາຍໃນ ຕິດຕາມກວດກາ ການຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນຈັດຕັ້ງປະຕິບັດ ຄຳສັ່ງແນະນຳສະບັບນີ້ ຢ່າງເຂັ້ມງວດ.

ລັດຖະມົນຕີວ່າການ ກະຊວງການຄ້າ.

ສຸວອະທວາດ ສະແຫວງສຶກສາ

<u>ບ່ອນສົ່ງ:</u>

- ຫ້ອງວ່າການສູນກາງພັກ. (ເພື່ອລາຍງານ)
- ຫ້ອງວ່າການສຳນັກງານນາຍົກ. (ເພື່ອລາຍງານ)
- ຄະນະກຳມະການແຜນການແຫ່ງລັດ. (ເພື່ອລາຍງານ)
- ກະຊວງອຸດສາຫະກຳ-ຫັດຖະກຳ. (ເພື່ອລາຍງານ)
- ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ-ກໍ່ສ້າງ. (ເພື່ອລາຍງານ)
- ກະຊວງການເງິນ. (ເພື່ອລາຍງານ)
- ທະນາຄານແຫ່ງ ສ.ປ.ປ ລາວ. (ເພື່ອລາຍງານ)
- ກົມພາສີ. (ເພື່ອຮ່ວມມື)
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ. (ເພື່ອຮ່ວມມື)
- ບັນດາກົມອ້ອມຂ້າງກະຊວງ. (ເພື່ອປະຕິບັດ)
- ພະແນກການຄ້າແຂວງ ທົ່ວປະເທດ. (ເພື່ອປະຕິບັດ)
- ບັນດາໂຮງງານທີ່ກ່ຽວຂ້ອງ. (ເພື່ອປະຕິບັດ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ເອກະພາບ ປະຊາທິປະໄຕ ວັດທະນາຖາວອນ

*****************************

ກະຊວງການຄ້າ

ກົມການຄ້າພາຍໃນ

ເລກທີ 0316 /ພນ

ນະຄອນວຽງຈັນ, ວັນທີ 23 JUL 20

## ບັນຊີລາຍການສິນຄ້າທີ່ຜະລິດໄດ້ພາຍໃນ ແລະ ສາມາດຕອບສະໜອງໃຫ້ຕະຫລາດພາຍໃນໄດ້.

| ລ/ດ | ລາຍຊື່ຂອງບັນດາໂຮງງານ ຫລື ບໍລິສັດ. | ລາຍການສິນຄ້າທີ່ຜະລິດໄດ້ ແລະ ລາຍລະອຽດຂອງສິນຄ້າ. | ຄວາມສາມາດຜະລິດ ແລະ ຕອບສະໜອງໄດ້ຢູ່ພາຍໃນ. | ໝາຍເຫດ |
|---|---|---|---|---|
| 0 | 1 | 2 | 3 | 4 |
| 1 | ບໍລິສັດວຽງຈັນອຸດສາຫະກຳຈຳກັດ<br>ທີ່ຢູ່: ກຳແພງນະຄອນວຽງຈັນ.<br>ໂທລະສັບ: 812089; 812166.<br>ໂທລະສານ: 812198. | ປະເພດສິນຄ້າ:<br>* ປະເພດເຫລັກເສັ້ນກໍ່ສ້າງ(ປ້ອງອ້ອຍ-ກ້ຽງ)<br>ຟີ8, ຟີ9, ຟີ10, ຟີ 12, ຟີ14, ຟີ16, ຟີ20 x10m<br>* ເຫລັກຮູບປະພັນ:<br>- ເຫລັກໂຕຊີ ຂະໜາດ 3" 4" ແລະ 5".<br>- ເຫລັກທໍ່ກົມ ຂະໜາດ 1" 2" 3" 4".<br>-ເຫລັກທໍ່ຫລ່ຽມ ຂະໜາດ 1" 2" 3" 4".<br>* ກະເບື້ອງ:<br>- ກະເບື້ອງລອນຄູ່ ຂະໜາດ 20ຊມ x 50ຊມ x 0,5ຊມ.<br>ສີຂາວ, ສີແດງ, ສີຂຽວ ແລະ ສີຟ້າ.<br>- ຫລັບກະເບື້ອງແບບຕ່າງໆ. | - ສາມາດຜະລິດໄດ້ 40.000ໂຕນ/ປີ.<br>- ຕອບສະໜອງໃຫ້:<br>* ກຳແພງນະຄອນວຽງຈັນ. * ແຂວງວຽງຈັນ.<br>* ແຂວງຫລວງພະບາງ. * ແຂວງຄຳມ່ວນ.<br>* ແຂວງສະຫວັນນະເຂດ. * ແຂວງບໍລິຄຳໄຊ.<br>- ສາມາດຜະລິດໄດ້ 3.000.000ແຜ່ນ/ປີ.<br>- ຕອບສະໜອງໄດ້:<br>* ກຳແພງນະຄອນວຽງຈັນ. * ແຂວງວຽງຈັນ.<br>* ແຂວງຫລວງພະບາງ. * ແຂວງຄຳມ່ວນ.<br>* ແຂວງສະຫວັນນະເຂດ. * ແຂວງບໍລິຄຳໄຊ. | - ບັນດາລາຍການສິນຄ້າທີ່ໄດ້ກຳນົດນີ້ ທາງໂຮງງານແມ່ນສາມາດຜະລິດ ແລະ ຕອບສະໜອງໃຫ້ໄດ້ ຕາມຄວາມຕ້ອງການຂອງຕະຫລາດ ແລະ ຜູ້ຊົມໃຊ້ ຕາມຈຳນວນ, ຂະໜາດທີ່ຕ້ອງການ. |
| 2 | ລັດວິສາຫະກິດພັດທະນາກະສິກຳ, ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (ໂຮງງານດິນບໍ່ອກ).<br>ທີ່ຢູ່: ກຳແພງນະຄອນວຽງຈັນ.<br>ໂທລະສັບ: 216646; 216242;214939<br>ໂທລະສານ: 216242. | ປະເພດສິນຄ້າ<br>- ຫລັບຂີ້ແຟ້ກ: ສີຂາວ, ສີເທົາ, ສີດັບໝູ, ສີແດງ, ສີຂຽວ ແລະ ສີຟ້າ.<br>* ຫລັບເທົ່າ: 30,3ຊມ x 20,5ຊມ. * ປິດຊາຍ:<br>* ຫລັບຂ້າງ: 42ຊມ x 18ຊມ. * ປິດລາມຕາ:<br>* ປິດຈົວ: * ປິດສີ່ຕາ:<br>* ປິດສັນໂຄ້ງ: * ຕໍ່ກາງ: | - ສາມາດຜະລິດໄດ້: 1.800.000ອັນ/ປີ.<br>- ຕອບສະໜອງໄດ້:<br>* ກຳແພງນະຄອນ.<br>* ແຂວງວຽງຈັນ.<br>* ແຂວງບໍລິຄຳໄຊ. | |
| 3 | ໂຮງງານສົມບູນອຸດສາຫະກຳ.<br>ທີ່ຢູ່: ກຳແພງນະຄອນວຽງຈັນ.<br>ໂທລະສັບ: 215351, 215361. | ປະເພດສິນຄ້າ:<br>-ນ້ຳຢາລ້າງຈານ ຍີ່ຫໍ້ STAR | - ສາມາດຜະລິດນ້ຳຢາລ້າງຈານໄດ້: 840.000 Kg/ປີ<br>ຕອ[illegible]ໜອງໄ[illegible] ທົ່ວປະເທດ. | |

| | | | |
|---|---|---|---|
| 4 | ໂຮງງານປາລາສຕິກ ແກ້ວເອເຊຍ<br>(ຫລັກ10ທ່າເດື່ອ).<br>ທີ່ຢູ່: ກຳແພງນະຄອນ.<br>ໂທລະສັບ: 313611. | <u>ປະເພດ ທໍ່ P.V.C</u><br>* ຂະໜາດ 18mm (1/2") x 4m.<br>* ຂະໜາດ 20mm (3/4") x 4m.<br>* ຂະໜາດ 25mm (1") x 4m.<br>* ຂະໜາດ 35mm (11/4") x 4m.<br>* ຂະໜາດ 40mm (11/2") x 4m.<br>* ຂະໜາດ 55mm (2") x 4m.<br>* ຂະໜາດ 80mm (3") x 4m.<br>* ຂະໜາດ 100mm (4") x 4m.<br>* ຂະໜາດ 125mm (5") x 4m.<br>* ຂະໜາດ 150mm (6") x 4m. | - ສາມາດຜະລິດໄດ້: 1.000.000 ເສັ້ນ/ປີ.<br>- ສາມາດຕອບສະໜອງໄດ້:<br>* ກຳແພງນະຄອນ. * ແຂວງບໍລິຄຳໄຊ.<br>* ແຂວງວຽງຈັນ. * ແຂວງຄຳມ່ວນ.<br>* ແຂວງຫົວພັນ. * ແຂວງສະຫວັນນະເຂດ.<br>* ແຂວງຊຽງຂວາງ. * ແຂວງຈຳປາສັກ.<br>* ແຂວງອຸດົມໄຊ. * ເຂດພິເສດໄຊສົມບູນ.<br>* ແຂວງຫລວງພະບາງ. |
| 5 | ໂຮງງານຊີມັງລາວ ຫລັງ I-II .<br>ທີ່ຢູ່: ກຳແພງນະຄອນ.<br>ໂທລະສັບໂຮງງານຫລັງ I: 216646;<br>214939; FaxG 216242.<br>ໂທລະສັບໂຮງງານ ຫລັງທີ II: 412111;<br>451116; 452572. | <u>ປະເພດຊີມັງ</u><br>- ຊີມັງປອດແລນ.<br>- ຊີມັງປະສົມ.<br>- ຊີມັງຜົງ. | - ສາມາດຜະລິດໄດ້: 280.000 ໂຕນ/ປີ.<br>- ສາມາດຕອບສະໜອງໄດ້:<br>* ແຂວງອຸດົມໄຊ. * ກຳແພງນະຄອນ.<br>* ແຂວງຊຽງຂວາງ. * ແຂວງບໍລິຄຳໄຊ.<br>* ແຂວງຫລວງພະບາງ. * ແຂວງຄຳມ່ວນ.<br>* ແຂວງວຽງຈັນ. * ແຂວງສະຫວັນນະເຂດ.<br>* ເຂດພິເສດໄຊສົມບູນ. |

<u>ຫົວໜ້າກົມການຄ້າພາຍໃນ.</u>

ແພງສະຫວັນ ອຸບພະລາດ